# ສະພາບບັນຫາທີ່ເປັນສິ່ງທ້າທາຍຕໍ່ການພັດທະນາຄຸນນະພາບການສຶກສາໃນສາຍສາມັນສຶກສາ ພາຍໃນແຂວງ ຈຳປາສັກ ສົກຮຽນ 2019-2020

ບຸນຫຼາຍ ຄຳແກ້ວ[1], ບຸນສົງ ສໍແກ້ວມະນີ [2], ສາຄອນ ສີສະຫວັດດີ [3] ແລະ ທິບພະວັນ ຂັນທະພອນ[4]

## ບົດຄັດຫຍໍ້

ການສຶກສາຄັ້ງນີ້ ແມ່ນຮຸບແບບການສຶກສາໃນດ້ານປະລິມານ ແລະ ຄຸນນະພາບ ໂດຍໄດ້ດໍາເນີນການຄົ້ນຄວ້າ ພາຍໃນ 9 ຕົວເມືອງ, 1 ນະຄອນ ພາຍໃນແຂວງ ຈໍາປາສັກ ສົກສຶກສາ 2019-2020, ເຊິ່ງໄດ້ກ□ານົດຈຸດປະສົງຂອງ ການສຶກສາໃນ 2 ຂອບເຂດຄື: (1) ເພື່ອສຶກສາສະພາບບັນຫາທີ່ເປັນອຸປະສັກຕໍ່ຄຸນນະພາບການສຶກສາ ສາຍສາມັນສຶກ ສາ ພາຍໃນແຂວງ ຈໍາປາສັກ. (2) ເພື່ອພິຈາລະນາເອົາຂໍ້ສະເໜີແນະມາກຳນົດເປັນແນວທາງໃນການພັດທະນາຄຸນ ນະພາບການສຶກສາສາຍສາມັນສຶກສາໃຫ້ດີຂຶ້ນ. ເຄື່ອງມືໃນການສຶກສາຄັ້ງນີ້ແມ່ນ ແບບສອບຖາມ ສໍາລັບພະນັກງານຄູ-ອາຈານ, ນັກຮຽນ ແລະ ແບບສໍາພາດສໍາລັບຫົວໜ້າຫ້ອງການສຶກສາ ແລະ ຜູ້ອໍານວຍການໂຮງຮຽນ. ການທົດສອບ ຄຸນນະພາບຂອງເຄື່ອງມື ແມ່ນໄດ້ຊອກຫາຄ່າຄວາມເຊື່ອໝັ້ນ Cronbach Alpha, ຈາກຜົນການທົດສອບເຄື່ອງມືພົບ ວ່າ ລະດັບຄວາມເຊື່ອໝັ້ນ .75. ສ□າລັບກຸ່ມຕົວຢ່າງໃນການຄົ້ນຄວ້າໃນຄັ້ງນີ້ແມ່ນຈໍານວນ 1,240 ຄົນ ເຊິ່ງລວມເອົາ ພາກສ່ວນຕ່າງໆຄື: ຫົວໜ້າຫ້ອງການສຶກສາທິການ-ກິລາເມືອງ 9 ຕົວເມືອງ ແລະ 1 ນະຄອນ, ຄະນະຜູ້ອໍານວຍການ ໂຮງຮຽນ ມັດທະຍົມ 30 ແຫ່ງ. ພະນັກງານຄູ-ອາຈານ ແລະ ນັກຮຽນຈາກໂຮງຮຽນມັດທະຍົມສຶກສາ 30 ແຫ່ງ ພາຍ ໃນແຂວງ ຈໍາປາສັກ. ການຄັດເລືອກກຸ່ມຕົວຢ່າງແມ່ນໄດ້ນໍາໃຊ້ເຕັກນິກແບບປະສົມປະສານລະຫວ່າງ (Mixed Sampling techniques) ເພື່ອຄັດເລືອກກຸ່ມຕົວຢ່າງໃຫ້ມີຄວາມເໝາະສົມ ແລະ ຖືກຕ້ອງຕາມຫຼັກວິຊາການ. ສະຖິຕິໃນການວິເຄາະຂໍ້ມູນແມ່ນຊອກຫາຄ່າເປີເຊັນ ແລະ ຄ່າສະເລ່ຍ ໂດຍໃຊ້ໄລຍະເວລາທັງໝົດໜຶ່ງປີ. ຈາກຜົນ ການສຶກສາ ສະພາບບັນຫາທີ່ເປັນສິ່ງທ້າທາຍຕໍ່ການພັດທະນາການສຶກສາ ສາຍສາມັນສຶກສາ ໃນ 4 ຂອບເຂດທີ່ໄດ້ກໍາ ນົດໄວ້ໃນການສຶກສາຄັ້ງນີ້ຄື: ບັນຫາດ້ານການປະຕິບັດຫຼັກສູດການຮຽນ-ການສອນ, ບັນຫາດ້ານຄູສອນ (ວິຊາການ, ຄອບຄົວ, ເສດຖະກິດ-ສັງຄົມ), ບັນຫາດ້ານນັກສຶກສາ (ຄອບຄົວ, ເສດຖະກິດ-ສັງຄົມ) ແລະ ບັນຫາດ້ານສິ່ງອໍານວຍ ຄວາມສະດວກໃນການຈັດການຮຽນ-ການສອນຂອງໂຮງຮຽນ. ຈາກຜົນການຄົ້ນຄວ້າຄັ້ງນີ້ແມ່ນໄປຕາມສົມມຸດຕິຖານ ທີ່ກໍານົດໄວ້ຄື: ໃນບັນດາ 4 ຕົວຊີ້ວັດ ຂອງການສຶກສາແມ່ນ ມີຄ່າສະເລ່ຍ ຢູ່ໃນລະດັບເຫັນດີ ຫາ ເຫັນດີຫຼາຍສຸດ. ດັ່ງນັ້ນ, ຈາກຜົນການສຶກສາບັນຫາຂອງ 4 ຕົວຊີ້ວັດດັ່ງກ່າວ ແມ່ນສິ່ງຜົນກະທົບທາງລົບຕໍ່ການພັດທະນາການສຶກສາ ສາຍສາມັນສຶກສາ ພາຍໃນແຂວງ ຈໍາປາສັກ. ສໍາລັບຜົນການສໍາພາດ ຫົວໜ້າຫ້ອງຫານສຶກສາ-ກິລາ ເມືອງ ແລະ ຜູ້ອໍານວຍການໂຮງຮຽນມັດທະຍົມ ແມ່ນມີຄວາມຄິດເຫັນຕໍ່ສະພາບບັນຫາຕ່າງໆຢູ່ໃນທິດທາງດຽວກັນ.

**ຄໍາສໍາຄັນ:** ອຸປະສັກກີດຂວາງ, ການພັດທະນາຄຸນນະພາບການສຶກສາ, ການສຶກສາສາຍ ສາມັນສຶກສາ

---

[1] ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ

[2] ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ E-mail: bounsongskn1983@gmail.com

[3] ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ

[4] ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ

# The Barriers Hindering the Quality of General Education Development in Champasack Province Academic Year 2019-2020

**Abstract**

This study was a combination of quantitative and qualitative methods by conducting research in 9 districts, 1 city in the Champasack province in academic year 2019-2020, which identified the objectives of the study into two areas: (1) to investigate the situations of problems that hinders the quality of general education in the province. (2) To consider the recommendations as guidelines for improving the quality of general education. The research instruments in this study were questionnaires for both the teachers and students, and an interview form for administrators. The quality of the instrument was tested for finding Cronbach Alpha, and the instrument was found in .75. of expectable levels. The sample size in this research was 1,240 people from these sections which included 9 heads of District Education and Sports Offices, a head of Capital city , the 30 principals, the 300 the teachers and 900 students from the 30 secondary schools in Champasack province. The research samples were carried out by using mixed sampling techniques in order to select the samples appropriately and technically. The statistics in the data analysis were to find the percentage and the average value. The study took for the whole time period of one year. From the results of the study, the situations of problems have affected to the development of general education in the 4 areas which were identified in this study in particularly; the problems of curriculum implementation, the problems of the teachers (academic, family, socio-economic), the problems of students (family, economics-social). And the teaching-learning facilities of the schools. The results of this study were based on the set assumptions of the 4 indicators regarding to the findings of the average values within the higher to the highest levels of consensus. Therefore, regarding to the study results of the 4 indicators were negative impacts on the quality of general education development in Champassak province. As well as the results of the interviews from the heads of the district education and sports offices and the principals of the 30 secondary schools were found as the appropriated opinions towards the related barriers and recommendation consensually.

**Keywords**: The Barriers, the Quality of General Education Development, General Education

## 1. ພາກສະເໜີ

ລັດຖະບານ ສປປ ລາວ ໄດ້ກໍານົດວິໄສທັດໃນການພັດທະນາວັດທະນະທໍາ-ສັງຄົມ ຮອດປີ 2030 ໄວ້ວ່າ: ຊັບພະຍາກອນມະນຸດໄດ້ຮັບການພັດທະນາໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກໍາລັງການຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຫຼາຍຂຶ້ນ. ພ້ອມດຽວກັນນີ້,ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ກໍ່ຄືມະຕິກອງປະຊຸມໃຫຍ່ສູນກາງພັກຄັ້ງທີ X ໄດ້ເນັ້ນໃຫ້ເຫັນບົດບາດສໍາຄັນຂອງວຽກງານສຶກສາ ແລະ ກິລາ ໂດຍຮຽກຮ້ອງໃຫ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ຊັບພະຍາກອນມະນຸດ ໂດຍສະເພາະແມ່ນປັບປຸງທັກສະ ແລະ ຄວາມສາມາດຂອງກໍາລັງແຮງງານ ສົ່ງເສີມໃຫ້ເຂົາເຈົ້າມີລະບຽບວິໄຈ, ມີຄວາມອົດທົນ, ເພີ່ມຈໍານວນນັກຊ່ຽວຊານ ແລະ ຜູ້ຊໍານານງານ, ປັບປຸງຂີດຄວາມສາມາດທາງດ້ານເຕັກນິກ ແລະ ວິຊາຊີບໃຫ້ແກ່ພະນັກງານຂອງລັດ, ພາກສ່ວນເອກະຊົນ ແລະ ບັນດາຜູ້ປະກອບການເພື່ອໃຫ້ສາມາດແຂ່ງຂັນໄດ້ພາຍໃນປະຊາຄົມເສດຖະກິດອາຊຽນ ແລະ ໃນໂລກ.(ກົມສ້າງຄູ, 2015).

ສະພາບລວມການພັດທະນາວຽກງານ ການສຶກສາ ແລະ ກິລາ.ເພື່ອຕອບສະໜອງໃຫ້ແກ່ແຜນຍຸດທະສາດການພັດນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2030), ແລະ ຍຸດທະສາດຮອດປີ 2025 ໂດຍສະເພາະແຜນການພັດທະນາການສຶກສາພາຍໃນ ແຂວງ ຈໍາປາສັກ. ການນໍາຂອງແຂວງໄດ້ປະຕິບັດຕາມນະໂຍບາຍຂອງພັກ ແລະ ລັດຖະບານ ໂດຍຖືເອົາວຽກການສຶກສາເປັນໃຈກາງຂອງການພັດທະນາຊັບພະຍາກອນມະນຸດ, ພາຍໃຕ້ການນໍາພາ-ຊີ້ນໍາຂອງຄະນະພັກ-ອົງການປົກຄອງແຂວງ ແລະ ດ້ວຍຄວາມເອົາໃຈໃສ່ຢ່າງຕັ້ງໜ້າຂອງຜູ້ບໍລິຫານການສຶກສາ ແລະ ກິລາ ແຕ່ລະຂັ້ນ ພະນັກງານຄູ-ອາຈານ, ນັກຮຽນ-ນັກ ສຶກສາ. ຕະຫຼອດຮອດການປະສານ ສົມທົບໃຫ້ການຊ່ວຍເຫຼືອຈາກທຸກພາກສ່ວນສັງຄົມ ເຮັດໃຫ້ວຽກງານການສຶກສາ ແລະ ກິລາ ໄດ້ຮັບການພັດທະນາດີຂຶ້ນ ທາງດ້ານປະລິມານ ແລະ ຄຸນນະພາບ, ທັງພາກລັດ ແລະ ເອກະຊົນ ຊຶ່ງໃນສົກຮຽນນີ້ ທົ່ວແຂວງ ມີໂຮງຮຽນທັງໝົດ 1,205 ແຫ່ງ, ເພີ່ມຂຶ້ນ 10 ແຫ່ງ ເທົ່າກັບ 0.83 %, ໃນນັ້ນ ເປັນໂຮງ ຮຽນລ້ຽງເດັກ-ອະນຸບານ 277 ແຫ່ງ, ເປັນຫ້ອງກຽມປະຖົມ 226 ຫ້ອງ, ໂຮງຮຽນປະຖົມ 761ແຫ່ງ, ໂຮງຮຽນມັດທະຍົມສຶກສາຕອນຕົ້ນ 84 ແຫ່ງ, ມັດທະຍົມສຶກສາຕອນປາຍ 4 ແຫ່ງ ແລະ ມັດທະຍົມສຶກສາສົມບູນ 79 ແຫ່ງ. ອາຄານຮຽນທັງໝົດ 1,602 ຫຼັງ ໃນນີ້ ເປັນຕຶກຖາວອນ 1,032 ຫຼັງ, ເຄິ່ງຖາວອນ 359 ຫລັງ, ຊົ່ວຄາວ 71 ຫຼັງ ແລະ ຊຸດໂຊມ 140 ຫຼັງ. ມີຫ້ອງຮຽນທັງໝົດ 5,474 ຫ້ອງ, ຈໍານວນນັກຮຽນທັງໝົດ 152,210 ຄົນ, ຍິງ 74,768 ຄົນ. ມີພະນັກງານ ຄູ-ອາຈານ ທັງໝົດ ລວມທັງຄູລັດ, ຄູເອກະຊົນ 7,666 ຄົນ, ຍິງ 5,035 ຄົນ. ມີສູນ, ໂຮງຮຽນ,ວິທະຍາໄລ ແລະ ມະຫາວິທະຍາໄລ ພາກລັດ ແລະ ເອກະຊົນທັງໝົດ 31 ແຫ່ງ. ຜົນສໍາເລັດ ຂອງການຈັດຕັ້ງປະຕິບັດ ຄາດໝາຍການພັດທະນາແບບຍືນຍົງ ໂດຍສະເພາະ 15 ຄາດໝາຍ ທີ່ສະພາແຫ່ງຊາດໄດ້ຮັບ ຮອງ. ມາຮອດປັດຈຸບັນ ໄດ້ເອົາໃຈໃສ່ຂະຫຍາຍໂຮງຮຽນ-ຫ້ອງຮຽນ ໄປສູ່ເຂດຊົນນະບົດ ຫ່າງໄກສອກຫຼີກ ໂຄ່ງລ່າງພື້ນຖານດ້ານການສຶກສາ ແລະ ກິລາ ໄດ້ຮັບການປັບປຸງປົວແປງ ແລະ ກໍ່ສ້າງໃໝ່

, ສະພາບແວດລ້ອມ ຂອງໂຮງຮຽນຫຼາຍແຫ່ງມີຄວາມສວຍງາມ ແລະ ສີຂຽວ. ເດັກໃນເກນອາຍຸ ໄດ້ເຂົ້າຮຽນຢ່າງທົ່ວເຖິງ ແລະ ມີຄວາມສະເໝີພາບລະຫວ່າງ ຍິງ-ຊາຍ, ຜົນການສອບເສັງ ເລື່ອນຂັ້ນ ແລະ ຈົບຊັ້ນໄດ້ຕາມຄາດໝາຍຂອງແຜນການ, ການສອບເສັງນັກຮຽນເກັ່ງລະດັບຕ່າງໆ ມີຜົນສຳເລັດສູງ, ມີໂຮງຮຽນ 303 ແຫ່ງ ໄດ້ປະກາດເປັນໂຮງຮຽນປອດສິ່ງເສບຕິດ, ຂະບວນການກິລາ ແລະ ສິລະປະ ໄດ້ມີການເຄື່ອນໄຫວຟົດຟື້ນສົມຄວນເປັນຕົ້ນ ການຍ່າງເພື່ອສຸຂະພາບ, ການຝຶກແອບ, ຝຶກຊ້ອມ ແລະ ການແຂ່ງຂັນລະດັບຕ່າງໆ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນໂຮງຮຽນໄດ້ມີການຈັດຂຶ້ນຢ່າງຕໍ່ເນື່ອງ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ພວກເຮົາຍັງມີຄວາມຫຍຸ້ງຍາກ, ບັນຫາ ແລະ ສິ່ງທ້າທາຍ ທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂ ເປັນຕົ້ນການສ້າງໂຮງຮຽນລ້ຽງເດັກ-ອະນຸບານ ຕົວແບບໃນເທດສະບານເມືອງແລະການຂະຫຍາຍ ຫ້ອງກຽມປະຖົມໄປສູ່ເຂດຊົນນະບົດບໍ່ໄດ້ຕາມຄາດໝາຍ, ຍ້ອນຂາດຄູ ແລະ ຫ້ອງຮຽນ, ອັດຕາການຄ້າງຫ້ອງ ແລະ ປະລະຊັ້ນປະຖົມຍັງສູງ, ອັດຕາການປະລະໃນຊັ້ນມັດທະຍົມຕອນຕົ້ນ,ຕອນປາຍເພີ່ມສູງຂຶ້ນ, ອັດຕາເຂົ້າຮຽນລວມ ໃນຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍຍັງຕ່ຳ. ຄຸນນະພາບການຮຽນການສອນຍັງບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການເຊັ່ນ: ໃນຊັ້ນປະຖົມຍັງມີນັກຮຽນຈຳນວນໜຶ່ງຂຽນ, ອ່ານພາສາລາວ ແລະ ຄິດໄລ່ເລກພື້ນຖານບໍ່ທັນໄດ້ດີ, ການສອບເສັງຈົບຊັ້ນ ປ.5, ມ.4 ແລະ ມ.7 ຄະແນນສອບເສັງຕົວຈິງສ່ວນຫຼາຍຍັງຕ່ຳ ສະນັ້ນ; ໃນຕໍ່ໜ້ານີ້ ພວກເຮົາຜູ້ບໍລິຫານການສຶກສາ ແລະ ກິລາ ແຕ່ລະຂັ້ນ, ຄະນະພັດທະນາການສຶກສາຂັ້ນບ້ານ, ສະມາຄົມພໍ່ແມ່ນັກຮຽນ, ພໍ່ແມ່ຜູ້ປົກຄອງເດັກ, ການຈັດຕັ້ງທຸກພາກສ່ວນເອົາໃຈໃສ່ປະສານສົມທົບກັນ ລະດົມທຶນຮອນ, ສະຕິປັນຍາ; ສ້າງແຜນການ, ໂຄງການ, ສຸມໃສ່ການປຸກສ້າງ ສ້ອມແປງຕຶກອາຄານຮຽນ, ສິ່ງອຳນວຍຄວາມສະດວກຕ່າງໆໃຫ້ພຽງພໍ ກັບຄວາມຕ້ອງການ, ສ້າງສະພາບແວດລ້ອມໂຮງຮຽນໃຫ້ມີຄວາມສະອາດ, ສວຍງາມ ແລະ ສີຂຽວ ພ້ອມທັງລະດົມ ເດັກໃນເກນອາຍຸ ໃຫ້ໄດ້ມາເຂົ້າຮຽນຢ່າງທົ່ວເຖິງ, ຈຳກັດການປະລະກາງປີ, ສະໜອງຄູ - ອາຈານ ສອນໃຫ້ພຽງພໍ ແລະ ເອົາໃຈໃສ່ຈັດການຮຽນ-ການສອນໃຫ້ດີກວ່າເກົ່າ, ເຮັດໃຫ້ປະລິມານ ແລະ ຄຸນນະພາບ ການສຶກສາ ແລະ ກິລາ ຢູ່ຂັ້ນໂຮງຮຽນ, ຂັ້ນເມືອງ ແລະ ນະຄອນ ລວມທັງທົ່ວແຂວງ ໃຫ້ໄດ້ຮັບການພັດທະນາດີຂຶ້ນ. ສະນັ້ນ, ທາງຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກເປັນອີກພາກສ່ວນໜຶ່ງ ທີ່ເຮັດໜ້າທີ່ໃນການສ້າງ ແລະ ພັດທະນາວຽກງານການສຶກສາ ພາຍໃນ 4 ແຂວງພາກໃຕ້ຂອງລາວ ເວົ້າສະເພາະກໍ່ແມ່ນພາຍໃນແຂວງ ຈຳປາສັກ. ມີພາລະບົດບາດໃນການພັດທະນາຄູເພື່ອຕອບສະໜອງໃຫ້ແກ່ໂຮງຮຽນມັດທະຍົມສຶກສາ. ເຊິ່ງທາງຄະນະທີມງານນັກຄົ້ນຄວ້າໄດ້ເລັງເຫັນຄວາມສຳຄັນ ແລະ ຈຳເປັນທີ່ຕ້ອງໄດ້ຄົ້ນຄວ້າເພື່ອສຶກສາກ່ຽວກັບ "ສະພາບບັນຫາທີ່ເປັນສິ່ງທ້າທາຍຕໍ່ການພັດທະນາຄຸນນະພາບການສຶກສາ ສາຍສາມັນສຶກສາ" ເພື່ອຊອກຫາສະພາບບັນຫາ, ແລະແນວທາງທີ່ຖືກຕ້ອງ ແລະເໝາະສົມ ໃນການພັດທະນາວຽກງານສຶກສາພາຍໃນແຂວງ ຈຳປາສັກ ໃຫ້ມີທິດທາງດີຂຶ້ນເລື້ອຍໆ.

## 2. ຈຸດປະສົງຂອງການວິໄຈ

ການສຶກສາຄັ້ງນີ້ແມ່ນມີຈຸດປະສົງເພື່ອຢາກສຶກສາ ເຖິງສະພາບບັນຫາທີ່ເປັນສິ່ງທ້າທາຍຕໍ່ການພັດທະນາຄຸນນະພາບການສຶກສາ ໃນສາຍສາມັນສຶກສາ ພາຍໃນແຂວງ ຈຳປາສັກ ທີມງານວິໄຈ ມີຄວາມສົນໃຈຢາກສຶກສາ ໂດຍເລັງໃສ່ 2 ຈຸດປະສົງດັ່ງລຸ່ມນີ້:

1) ເພື່ອສຶກສາສະພາບບັນຫາທີ່ເປັນອຸປະສັກຕໍ່ຄຸນນະພາບການສຶກສາ ສາຍສາມັນສຶກສາ ພາຍໃນແຂວງ ຈຳປາສັກ.

2) ເພື່ອພິຈາລະນາເອົາຂໍ້ສະເໜີແນະມາກຳນົດເປັນແນວທາງໃນການພັດທະນາຄຸນນະພາບການສຶກສາສາຍສາມັນສຶກສາໃຫ້ດີຂຶ້ນ.

## 3. ສົມມຸດຖານການວິໄຈ

ການຄົ້ນຄວ້າຄັ້ງນີ້ແມ່ນເພື່ອສຶກສາໃນ 4 ຂອບເຂດສະພາບບັນຫາ ທີ່ຄາດຄະເນວ່າຈະເປັນສິ່ງທ້າທາຍກີດຂວາງຕໍ່ການພັດທະນາວຽກງານການສຶກສາ ສາຍສາມັນສຶກສາ ພາຍໃນແຂວງ ຈຳປາສັກ ເປັນຕົ້ນແມ່ນ ບັນຫາດ້ານການປະຕິບັດຫຼັກສູດການຮຽນ-ການສອນ, ບັນຫາດ້ານຄູສອນ, ບັນຫາດ້ານນັກຮຽນ ແລະ ບັນຫາດ້ານສິ່ງອຳນວຍຄວາມສະດວກໃນດຳເນີນຈັດການຮຽນ-ການສອນ.

## 4. ນິຍາມສັບສະເພາະ

- ອຸປະສັກກີດຂວາງ ແມ່ນບັນຫາຕ່າງໆທີ່ກຳນົດໄວ້ໃນຂອງເຂດການສຶກສາ ເປັນຕົ້ນແມ່ນແມ່ນ ບັນຫາດ້ານການປະຕິບັດຫຼັກສູດການຮຽນ-ການສອນ, ບັນຫາດ້ານຄູສອນ, ບັນຫາດ້ານນັກຮຽນ ແລະ ບັນຫາດ້ານສິ່ງອຳນວຍຄວາມສະດວກໃນດຳເນີນຈັດການຮຽນ-ການສອນ.
- ການພັດທະນາຄຸນນະພາບການສຶກສາ ແມ່ນຂະບວນການພັດທະນາຄຸນນະພາບການສຶກສາ ສາຍສາມັນ ໂດຍອີງໃສ່ 4 ຂອບເຂດຕົວຊີ້ວັດເປັນຕົ້ນແມ່ນໂຮງຮຽນມັດທະຍົມສົມບູນ ພາຍໃນແຂວງ ຈຳປາສັກ.
- ການສຶກສາ ສາຍສາມັນສຶກສາ ໃນການຄົ້ນຄວ້າຄັ້ງນີ້ແມ່ນເລັງໃສ່ການພັດທະນາການສຶກສາ ສາຍສາມັນ ຊັ້ນມັດທະຍົມສົມບູນ ພາຍໃນແຂວງ ຈຳປາສັກ.

## 5. ວິທີດຳເນີນການວິໄຈ

**1.** ລະບຽບວິທີການວິໄຈ

ໃນການດຳເນີນການສຶກສາສະພາບບັນຫາທີ່ເປັນອຸປະສັກຕໍ່ການພັດທະນາຄຸນນະ ພາບຂອງການສຶກສາສາມັນສຶກສາ ພາຍໃນແຂວງ ຈຳປາສັກ, ສົກຮຽນ 2019-2020 ໄດ້ດຳເນີນຕາມຂັ້ນ ຕອນດັ່ງລຸ່ມນີ້ :

1) ສຶກສາແນວຄິດ, ທິດສະດີ, ເອກະສານ, ຜົນງານການວິໄຈທີ່ກ່ຽວຂ້ອງ.

2) ດຳເນີນການອອກແບບສອບຖາມ ແລະ ແບບສຳພາດ ໂດຍໃຫ້ສອດຄ່ອງ ແລະ ຄວບຄຸມຂອບ ເຂດທີ່ສຶກສາ.

3) ຈັດກອງປະຊຸມພາຍໃນກຸ່ມ ເພື່ອກວດແກ້, ປັບປຸງແບບສອບຖາມ ແລະ ແບບສຳພາດ ທີ່ສ້າງ ຂຶ້ນຮ່ວມກັນ ໃຫ້ມີຄວາມສົມບູນຍິ່ງຂຶ້ນ.

4) ນຳເຄື່ອງມືທີ່ສ້າງຂຶ້ນໄປທົດລອງ (Try-out) ກັບຄູ-ອາຈານ ແລະ ນັກຮຽນມັດທະຍົມທີ່ບໍ່ເປັນ ກຸ່ມຕົວຢ່າງຈຳນວນ 30 ຄົນ ແລ້ວໄປຄຳນວນຫາຄ່າຄວາມເຊື່ອໝັ້ນຂອງເຄື່ອງມື ດ້ວຍວິທີຂອງ (Cronbach) ເຊິ່ງເອີ້ນວ່າສຳປະສິດອານຟາ (α-Coefficient). ຜ່ານການຄຳນວນເຫັນວ່າເຄື່ອງມືມີຄວາມເຊື່ອໝັ້ນໃນລະດັບ 0.75 (Cronbach Alpha, 1952) cited in(SORKEOMANY, 2016).

5) ນຳເຄື່ອງມືທີ່ເປັນສະບັບສົມບູນລົງໄປເກັບກຳຂໍ້ມູນກັບກຸ່ມຕົວຢ່າງ (ນັກຮຽນຊັ້ນມັດທະຍົມສຶກ ສາ, ຄູ-ອາຈານ, ຜູ້ອຳນວຍການໂຮງຮຽນ ແລະ ຫົວໜ້າຫ້ອງການສຶກສາເມືອງ ຈຳນວນ 9 ຕົວເມືອງ ແລະ 1 ນະຄອນ ພາຍໃນແຂວງຈຳປາສັກ).

6) ນຳຂໍ້ມູນທີ່ໄດ້ຈາກການເກັບກຳຂໍ້ມູນມາວິເຄາະ ໂດຍນຳໃຊ້ໂປຼແກຣມສຳເລັດຮູບທາງສະຖິຕິ ຄຳ ນວນຫາຄ່າສະຖິຕິທີ່ຕ້ອງການ.

**2. ຂອບເຂດການວິໄຈ**

- ປະຊາກອນ:

ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ ໄດ້ແກ່: ຫົວໜ້າຫ້ອງການສຶກສາທິການ ແລະກິລາເມືອງ 9 ຕົວເມືອງ , 1 ນະຄອນ, ຄະນະຜູ້ອຳນວຍການ, ພະນັກງານຄູ-ອາຈານ ແລະ ນັກຮຽນຈາກໂຮງຮຽນມັດທະຍົມສຶກສາ (ມ.5+ ມ.6+ມ.7) ທັງໝົດ 83 ແຫ່ງ ພາຍໃນແຂວງ ຈຳປາສັກ. ເຊິ່ງມີຈຳນວນດັ່ງນີ້:

**ຕາຕະລາງ 01: ຈຳນວນປະຊາກອນ**

| ລ/ດ | ປະຊາກອນ | ຈຳນວນ |
|---|---|---|
| 1 | ຫົວໜ້າຫ້ອງການສຶກສາທິການ-ກິລາ ເມືອງ | 27 |
| 2 | ຫົວໜ້າຫ້ອງການສຶກສາທິການ-ກິລາ ນະຄອນ | 3 |
| 3 | ຜູ້ອຳນວຍການໂຮງຮຽນມັດທະຍົມ | 249 |
| 4 | ຄູ-ອາຈານ | 3,553 |
| 5 | ນັກຮຽນມັດທະຍົມສຶກສາ | 19,313 |
| | ***ລວມ*** | ***23,145*** |

- ກຸ່ມຕົວຢ່າງ

ກຸ່ມຕົວຢ່າງໃນການສຶກສາ ແມ່ນກຳນົດເອົາພາກສ່ວນໜຶ່ງຂອງປະຊາກອນ, ເຊິ່ງການຄັດເລືອກກຸ່ມຕົວຢ່າງ ແມ່ນໄດ້ນຳໃຊ້ເຕັກນິກແບບປະສົມປະສານລະຫວ່າງ **(Mixed Sampling techniques)** ເພື່ອຄັດເລືອກກຸ່ມຕົວຢ່າງ ໃຫ້ມີຄວາມເໝາະສົມ ແລະ ຖືກຕ້ອງຕາມຫຼັກວິຊາການ. (ກົມສຶກສາຊັ້ນສູງ, 2016) ເຊິ່ງມີຂັ້ນຕອນ ແລະ ວິທີການ ກຳນົດດັ່ງລາຍລະອຽດລຸ່ມນີ້:

1) ຂັ້ນຕອນທຳອິດແມ່ນໃຊ້ວິທີຄັດກຸ່ມຕົວຢ່າງແບບງ່າຍ (Convenience sampling techniques) ເພື່ອກຳນົດເອົາຕົວເມືອງລະ 3 ໂຮງຮຽນ ຄືໂຮງຮຽນທີ່ຕັ້ງຢູ່ໃກ້ເມືອງ ແລະ ສະດວກໃນການລົງເກັບຂໍ້ມູນ;

2) ການເລືອກກຸ່ມຕົວຢ່າງທີ່ເປັນນັກຮຽນ ແມ່ນນໍາໃຊ້ວິທີ (quota sampling technique) ເພື່ອກໍານົດ ອັດສ່ວນຂອງກຸ່ມຕົວຢ່າງໃຫ້ມີຄວາມເໝາະສົມຄື: ນັກຮຽນ 30 ຄົນຕໍ່ໜຶ່ງໂຮງຮຽນ ໝາຍຄວາມວ່າ ໂຮງຮຽນ 30 ແຫ່ງຈະມີກຸ່ມຕົວຢ່າງທີ່ເປັນນັກຮຽນທັງໝົດ 900 ຄົນ.

3) ການເລືອກກຸ່ມຕົວຢ່າງທີ່ເປັນຄູ-ອາຈານ ແມ່ນໃຊ້ວິທີການເລືອກກຸ່ມຕົວຢ່າງແບບບັງ ເອີນ (accidental sampling technique) ໝາຍຄວາມວ່າ ໃນຄະນະລົງເກັບກໍາຂໍ້ມູນອາດພົບກັບພະນັກງານວິ ຊາການ ແລະ ຄູ-ອາຈານແບບບັງເອີນ, ອາດຈະຫຼາຍ ຫຼື ໜ້ອຍຂຶ້ນກັບຈໍານວນຕົວຈິງ ເຊິ່ງສາມາດສໍາຫຼວດພະນັກງານຄູ-ອາຈານ ທັງໝົດ 300 ຄົນ.

4) ສໍາລັບກຸ່ມຕົວຢ່າງທີ່ເປັນຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຜູ້ອໍານວຍການ, ທາງ ຄະນະນັກຄົ້ນຄວ້າແມ່ນໃຊ້ວິທີເລືອກກຸ່ມຕົວຢ່າງແບບສະເພາະເຈາະຈົງ (Purposive sampling technique ) ກໍາ ນົດເອົາຜູ້ອໍານວຍການໂຮງຮຽນມັດທະຍົມ 30 ຄົນ ຈາກໂຮງຮຽນ 30 ແຫ່ງ ແລະ ຫົວໜ້າຫ້ອງການສຶກສາທິການ ແລະກິລາເມືອງ ຈໍານວນ 9 ຄົນ ແລະ 1 ຄົນ ແມ່ນຈາກ 1 ນະຄອນ ພາຍໃນແຂວງ ຈໍາປາສັກ ເພື່ອສໍາພາດເອົາຂໍ້ມູນ ໃຫ້ມີຄວາມໜັກແໜ້ນ, ມີຄວາມໜ້າເຊື່ອຖື ແລະ ຮັບປະກັນຄຸນນະພາບດີ.

**ຕາຕະລາງ 02: ການກ□ານົດກຸ່ມຕົວຢ່າງ**

| ລ/ດ | ຕົວຊີ້ວັດກຸ່ມຕົວຢ່າງ | ຈ/ນກຸ່ມຕົວຢ່າງ | ສັດສ່ວນ(%) |
|---|---|---|---|
| 1 | ຫົວໜ້າສຶກສາທິການ-ກະລາ ເມືອງ ແລະ 1 ນະຄອນ | 10 | 0.81 |
| 2 | ຜູ້ອໍານວຍການໂຮງຮຽນ | 30 | 2.42 |
| 3 | ພະນັກງານ ຄູ-ອາຈານ | 300 | 24.19 |
| 4 | ນັກຮຽນ | 900 | 72.58 |
| | ***ລວມ*** | ***1,240*** | ***100*** |

**3.** ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການດ□າເນີນການຄົ້ນຄວ້າວິໄຈ ໄດ້ແກ່: ແບບສອບຖາມ (ສໍາລັບຄູ-ອາຈານ ແລະ ນັກ ຮຽນ) ແລະ ແບບສໍາພາດ (ສໍາລັບຫົວໜ້າຫ້ອງການສຶກສາເມືອງ ແລະ ຜູ້ອໍານວຍການໂຮງຮຽນ).

**4.** ວິທີການເກັບລວບລວມຂໍ້ມູນ

ໃນການເກັບກ□າຂໍ້ມູນທີມວິໄຈ ໄດ້ດໍາເນີນການຕາມຂັ້ນຕອນດັ່ງນີ້ :

1) ຂໍໜັງສືແຈ້ງການຈາກພະແນກສຶກສາທິການ ແລະ ກິລາ ແຂວງ ຈໍາປາສັກ ແລະ ລົງແຈ້ງແຕ່ລະພາກ ສ່ວນ ທີ່ເປັນກຸ່ມເປົ້າໝາຍໃນການເກັບກໍາຂໍ້ມູນ;

2) ນຳໜັງສືດັ່ງກ່າວສະເໜີ ຂໍອະນຸຍາດເກັບກຳຂໍ້ມູນນຳບັນດາຫົວໜ້າຫ້ອງການສຶກສາເມືອງ ແລະນະຄອນ, ຜູ້ອຳນວຍການໂຮງຮຽນ, ຄູ-ອາຈານ ແລະ ນັກຮຽນມັດທະຍົມສຶກສາ ໂດຍສະເໜີຜ່ານຫົວໜ້າພະແນກສຶກສາ ທິການ ແລະ ກິລາແຂວງ ຈຳປາສັກ;

3) ລົງເກັບກຳຂໍ້ມູນນຳກຸ່ມຕົວຢ່າງຕາມວັນເວລາທີ່ໄດ້ນັດໝາຍ ແລະ ຕາມຈຳນວນຂອງກຸ່ມຕົວຢ່າງ (ສຳ ລັບການເກັບກຳຂໍ້ມູນນຳຫົວໜ້າຫ້ອງການສຶກສາ ແລະ ກິລາເມືອງ ແລະ ຄະນະອຳນວຍການ ແມ່ນນຳໃຊ້ແບບສຳພາດ ເຊິ່ງໄດ້ນຳໃຊ້ເທບບັນທຶກສຽງ; ສ່ວນການເກັບກຳຂໍ້ມູນນຳຄູ-ອາຈານ ແລະ ນັກຮຽນ ແມ່ນນຳໃຊ້ ແບບສອບຖາມ);

4) ສັງລວມ ແລະ ເກັບກຳຂໍ້ມູນທັງໝົດກັບຄືນມາ ເພື່ອກະກຽມດຳເນີການວິເຄາະຂໍ້ມູນໃນຂັ້ນຕໍ່ໄປ.

**5.** ການວິເຄາະຂໍ້ມູນ

ພາຍຫຼັງທີ່ສັງລວມຂໍ້ມູນທັງໝົດຈາກກຸ່ມຕົວຢ່າງແລ້ວ ທາງຄະນະທີມວິໄຈ ຈະໄດ້ຈັດກອງປະຊຸມ ເພື່ອຈັດແບ່ງໜ້າທີ່ຮັບຜິດຊອບໃນການວິເຄາະຂໍ້ມູນໃຫ້ເປັນລະບົບ. ເຊິ່ງຂັ້ນຕອນໃນການວິເຄາະຂໍ້ມູນມີດັ່ງນີ້:

- ສຳລັບຂໍ້ມູນທີ່ໄດ້ຈາກແບບສອບຖາມ :

1) ກວດສອບຄວາມຖືກຕ້ອງໃນການຕອບແບບສອບຖາມແຕ່ລະຂໍ້ແຕ່ລະສະບັບຂອງກຸ່ມຕົວຢ່າງ

2) ນຳຂໍ້ມູນທີ່ໄດ້ຈາກແບບສອບຖາມປ້ອນເຂົ້າໂປຣແກຣມ*ສຳເລັດຮູບທາງສະຖິຕິ* ແລະ ດຳເນີນການວິເຄາະຕາມ*ຄ່າ*ສະຖິຕິທີ່ຕ້ອງການ.

3) ນຳຜົນທີ່ໄດ້ຈາກການວິເຄາະມາປຽບທຽບກັບເກນ ແລະຕີຄວາມໝາຍຜົນໄດ້ຮັບ.

***ຕາຕະລາງ 03: ລະດັບຕົວແປຄ່າສະເລ່ຍ***

| **ລະດັບຄ່າສະເລ່ຍ** | **ລະດັບຄວາມຄິດເຫັນ** |
|---|---|
| 4.51 - 5.00 | ເຫັນດີຫຼາຍທີ່ສຸດ |
| 3.51 - 4.50 | ເຫັນດີຫຼາຍ |
| 2.51 - 3.50 | ເຫັນດີປານກາງ |
| 1.51 - 2.50 | ບໍ່ເຫັນດີ |
| 1.00 - 1.50 | ບໍ່ເຫັນດີຫຼາຍທີ່ສຸດ |

- ສ□າລັບຂໍ້ມູນທີ່ໄດ້ຈາກແບບສ□າພາດ:

1) ນໍາເທບບັນທຶກການສໍາພາດຈາກຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຄະນະ ອໍານວຍການໂຮງຮຽນ ມາຖ່າຍທອດເປັນຕົວໜັງສື, ຫຼັງຈາກນັ້ນກໍອ່ານຫຼາຍໆຄັ້ງເພື່ອໃຫ້ເກີດຄວາມເຂົ້າໃຈພາບ ລວມຂອງຂໍ້ມູນທີ່ໄດ້ ແລະ ພິຈາລະນາຈຸດທີ່ສໍາຄັນ.

2) ນໍາຂໍ້ມູນທີ່ໄດ້ມາອ່ານລະອຽດອີກຄັ້ງ ແລ້ວຈຶ່ງຕີຄວາມໝາຍ ພ້ອມທັງດຶງເອົາຈຸດທີ່ສໍາຄັນທີ່ກ່ຽວ ຂ້ອງກັບບັນຫາຂອງການສຶກສາ.

3) ນໍາຂໍ້ຄວາມ ຫຼື ປະໂຫຍກທີ່ຄືກັນ ຫຼື ໃກ້ຄຽງກັນມາໄວ້ກຸ່ມດຽວກັນ ໂດຍມີລະຫັດກໍາກັບທຸກຂໍ້ ຄວາມ ຫຼື ທຸກປະໂຫຍກ.

4) ຈັດລຽງຄວາມສໍາຄັນຂອງແຕ່ລະບັນຫາໂດຍອີງໃສ່ຄວາມຖີ່ຂອງຂໍ້ມູນ, ພ້ອມດ້ວຍອະທິບາຍ ແລະ ຕີຄວາມໝາຍຜົນຂອງການສຶກສາ.

## 6. ຜົນການວິໄຈ

**ຕາຕະລາງ 04: ຜົນການວິເຄາະຄວາມຄິດເຫັນຂອງພະນັກງານຄູ-ອາຈານ**

| ລ/ດ | ຕົວຊີ້ວັດ | $\bar{X}$ | S.D | ລະດັບຄວາມຄິດເຫັນ |
|---|---|---|---|---|
| 1 | ບັນຫາດ້ານນັກຮຽນ | 4.19 | 0.41 | ເຫັນດີຫຼາຍ |
| 2 | ບັນຫາດ້ານການປະຕິບັດຫຼັກສູດການຮຽນ-ການສອນ | 4.01 | 0.37 | ເຫັນດີຫຼາຍ |
| 3 | ບັນຫາສິ່ງອໍານວຍຄວາມສະດວກໃນການຈັດການຮຽນ-ການສອນ | 4.30 | 0.57 | ເຫັນດີຫຼາຍ |
| 4 | ບັນຫາສະພາບຄວາມຫຍຸ້ງຍາກຂອງຄູ-ອາຈານ | 4.36 | 0.33 | ເຫັນດີຫຼາຍ |
| | ສະເລ່ຍ | 4.22 | 0.22 | ເຫັນດີຫຼາຍ |

ຈາກຕາຕະລາງ 04 ສະແດງໃຫ້ເຫັນຜົນການວິເຄາະຄວາມຄິດເຫັນຂອງພະນັກງານຄູ-ອາຈານ ທີ່ມີຕໍ່ກັບບັນຫາທີ່ເປັນສິ່ງທ້າທາຍຕໍ່ການພັດທະນາການສຶກສາ ສາຍສາມັນ ເຊິ່ງຜົນການວິເຄາະດັ່ງກ່າວພົບວ່າ: ຈໍານວນຄ່າສະເລ່ຍລວມແມ່ນ $(\bar{X} = 4.22, SD. = 0.22)$ ເຊິ່ງຢູ່ໃນລະດັບຄວາມຄິດເຫັນ *ເຫັນດີຫຼາຍ* ໂດຍສະເພາະແມ່ນຜົນການວິເຄາະທັງ 4 ຕົວຊີ້ວັດທີ່ໄດ້ສະຫຼູບຜົນໃນຕາຕະລາງ 04 ເຊິ່ງມີຄ່າສະເລ່ຍ ຢູ່ໃນລະດັບຄວາມຄິດເຫັນ *ເຫັນດີຫຼາຍສຸດ* ເປັນຕົ້ນແມ່ນບັນຫາດ້ານນັກຮຽນ, ດ້ານການປະຕິບັດຫຼັກສູດການຮຽນ-ການສອນ, ດ້ານສິ່ງອໍານວຍຄວາມສະດວກ

ໃນການຈັດການຮຽນ-ການສອນ ແລະດ້ານສະພາບຄວາມຫຍຸ້ງຍາກຂອງຄູ-ອາຈານ. ສະນັ້ນ, ຜົນການວິເຄາະໃນ 4 ຕົວຊີ້ວັດດັ່ງກ່າວ ແມ່ນອາດເປັນບັນຫາທ້າທາຍຕໍ່ການພັດທະນາການສຶກສາ ສາຍສາມັນ ພາຍໃນແຂວງ ຈຳປາສັກ.

ຕາຕະລາງ 05: ຜົນການວິເຄາະຄວາມຄິດເຫັນຂອງນັກຮຽນ

| ລ/ດ | ຕົວຊີ້ວັດ | $\bar{X}$ | S.D | ລະດັບຄວາມຄິດເຫັນ |
|---|---|---|---|---|
| 1 | ບັນຫາດ້ານຕົວນັກຮຽນເອງ | 4.17 | 0.47 | ເຫັນດີຫຼາຍ |
| 2 | ບັນຫາດ້ານການປະຕິບັດຫຼັກສູດການຮຽນ-ການສອນ | 4.26 | 0.48 | ເຫັນດີຫຼາຍ |
| 3 | ບັນຫາສິ່ງອຳນວຍຄວາມສະດວກໃນການຈັດການຮຽນ-ການສອນ | 4.42 | 0.47 | ເຫັນດີຫຼາຍ |
| 4 | ບັນຫາທັດສະນະຄະຕິ ແລະ ວິທີສອນຂອງຄູ-ອາຈານ | 4.07 | 0.50 | ເຫັນດີຫຼາຍ |
| | ສະເລ່ຍ | 4.23 | 0.48 | ເຫັນດີຫຼາຍ |

ຈາກຕາຕະລາງ 05 ສະແດງໃຫ້ເຫັນຜົນການວິເຄາະຄວາມຄິດເຫັນຂອງນັກຮຽນ ທີ່ມີຕໍ່ກັບບັນຫາທີ່ເປັນສິ່ງທ້າທາຍຕໍ່ການພັດທະນາການສຶກສາ ສາຍສາມັນ ເຊິ່ງຜົນການວິເຄາະດັ່ງກ່າວ ແມ່ນມີຄວາມສອດຄ່ອງກັບຄວາມຄິດເຫັນຂອງພະນັກງານຄູ-ອາຈານເຊິ່ງສະແດງໃຫ້ເຫັນຈຳນວນຄ່າສະເລ່ຍລວມແມ່ນ ($\bar{X} = 4.23,\ SD. = 0.48$) ຢູ່ໃນລະດັບຄວາມຄິດເຫັນ *ເຫັນດີຫຼາຍ* ໂດຍສະເພາະແມ່ນຜົນການວິເຄາະທັງ 4 ຕົວຊີ້ວັດທີ່ໄດ້ສະຫຼຸບຜົນໃນຕາຕະລາງ 02 ເຊິ່ງມີຄ່າສະເລ່ຍ ຢູ່ໃນລະດັບຄວາມຄິດເຫັນ *ເຫັນດີຫຼາຍສຸດ* ເປັນຕົ້ນແມ່ນບັນຫາດ້ານນັກຮຽນເອງ, ດ້ານການປະຕິບັດຫຼັກສູດການຮຽນ-ການສອນ, ດ້ານສິ່ງອຳນວຍຄວາມສະດວກໃນການຈັດການຮຽນ-ການສອນ ແລະດ້ານບັນຫາທັດສະນະຄະຕິ ແລະ ວິທີສອນຂອງຄູ. ຜົນການວິເຄາະດັ່ງກ່າວ ສາມາດສະຫຼຸບໄດ້ວ່າ ທັງ 4 ຕົວຊີ້ວັດນີ້ ແມ່ນມີຜົນກ່ຽວພັນກັບຄວາມຄິດເຫັນຂອງພະນັກງານ ຄູ-ອາຈານ. ສະນັ້ນ, ບັນຫາດັ່ງກ່າວ ກໍ່ອາດເປັນບັນຫາທ້າທາຍຕໍ່ການພັດທະນາການສຶກສາ ສາຍສາມັນ ພາຍໃນແຂວງ ຈຳປາສັກ ເຊັ່ນກັນ.

ນອກຈາກຜົນການວິເຄາະກ່ຽວກັບຄວາມຄິດເຫັນຂອງຄູ-ອາຈານ ແລະນັກຮຽນ ຕໍ່ກັບບັນຫາຕ່າງໆທີ່ເປັນສິ່ງທ້າທາຍໃນການພັດທະນາການສຶກສາ ສາຍສາມັນສຶກສາ ທີ່ໄດ້ສັງລວມໃນຕາຕະລາງທີ 04 ແລະ 05. ສຳລັບການສຶກສາຄັ້ງນີ້ຍັງໄດ້ສັງລວມເອົາຜົນການວິເຄາະທີ່ໄດ້ຈາກການສຳພາດຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ 9 ຕົວເມືອງ 1 ນະຄອນ ແລະຜູ້ອຳນວຍການໂຮງຮຽນມັດທະຍົມສົມບູນ 30 ແຫ່ງ ພາຍໃນແຂວງ ຈ□າປາສັກ. ຜົນການວິເຄາະດັ່ງກ່າວພົບວ່າ ຍັງມີຫຼາຍບັນຫາທີ່ໜ້າສົນໃຈສຶກສາ ເປັນຕົ້ນ ແມ່ນ 100 % ຂອງຜູ້ຖືກສ□າພາດ ໄດ້ກ່າວວ່າ

ນັກຮຽນໃນປັດຈຸບັນແມ່ນມີຄວາມທ້າທາຍທີ່ສຸດ ໂດຍສະເພາະແມ່ນ ບັນຫາທາງດ້ານສັງຄົມ, ສະພາບເສດຖະກິດ ແລະຂາດຄວາມເຂົ້າໃຈຕໍ່ຄວາມສໍາຄັນຂອງການສຶກສາ. ນອກຈາກນັ້ນ, 95% ຂອງຜູ້ຖືກສ□າພາດໄດ້ກ່າວວ່າ ພະນັກງານຄູ-ອາຈານ ແມ່ນຍັງຂາດທັກສະ, ເຕັກນິກ, ວິທີການສິດສອນທີ່ດີ ລວມທັງບັນຫາຊີວິດການເປັນຢູ່ຂອງ ພະນັກງານຄູ-ອາຈານ. ອີກບັນຫາໜຶ່ງທີ່ສໍາຄັນ ຄື 90% ຂອງຜູ້ທີ່ຖືກສ□າພາດຍັງໄດ້ໃຫ້ຄວາມຄິດເຫັນວ່າ ໂຮງຮຽນ ຍັງຂາດສິ່ງອໍານວຍຄວາມສະດວກຫຼາຍດ້ານໃນການດໍາເນີນການຮຽນ-ການສອນ ເປັນຕົ້ນແມ່ນ ດ້ານອຸປະກອນຮັບໃຊ້ ແລະພື້ນຖານໂຄງລ່າງອື່ນໆ. ອີກ 80% ຂອງຜູ້ຖືກສໍາພາດຍັງໄດ້ກ່າວວ່າ ພໍ່ແມ່ຜູ້ປົກຄອງຈ□ານວນໜຶ່ງ ແມ່ນຍັງຂາດ ການລ້ຽງລູກທີ່ຖືກວິທີທີ່ເໝາະສົມ ແລະຂາດຄວາມເອົາໃຈໃສ່ໃນການສຶກສາອົບຮົມລູກຂອງຕົນ ແລະຂາດການຮ່ວມ ມືຢ່າງຈິງຈັງລະຫວ່າງສະຖາບັນຄອບຄົວກັບໂຮງຮຽນໃນການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນກັບນັກຮຽນ. ນອກຈາກນີ້, ກວມເອົາອັດຕາສ່ວນຫຼາຍກວ່າ 70% ຂອງຜູ້ຖືກສໍາພາດຍັງໄດ້ໃຫ້ຂໍ້ແນະນໍາເພີ່ມເຕີມໃນທິດທາງດຽວກັນໃນການແກ້ ໄຂດ້ານປະກົດການຫຍໍ້ທໍ້ຕໍ່ການພັດທະນາການສຶກສາ ສາຍສາມັນສຶກສາພາຍໃນແຂວງ ຈໍາປາສັກ ຄື: ໃຫ້ພາກສ່ວນທີ່ ກ່ຽວຂ້ອງສ້າງແຜນຝຶກອົບຮົມຜູ້ບໍລິຫານການສຶກສາ, ວາງລະບົບການຄວບຄຸມນັກຮຽນຄືນໃໝ່ ໂດຍຜ່ານການຮ່ວມມື ລະຫວ່າງໂຮງຮຽນ, ຄອບຄົວ ແລະ ຊຸມຊົນ. ຈັດຕັ້ງກອງປະຊຸມພົບປະພໍ່-ແມ່ນັກຮຽນເພື່ອປຶກສາຫາລືກ່ຽວກັບ ສະພາບບັນຫາຂອງນັກຮຽນ. ວາງນະໂຍບາຍຄວບຄຸມຄືນກ່ຽວກັບບັນຫາສັງຄົມຊູ້ສາວໃນໄວຮຽນ. ວາງນະໂຍບາຍ ຄວບຄຸມຄືນກ່ຽວກັບຮ້ານອາຫານ ທີ່ເປັນບ່ອນຊຸມແຊວ ດື່ມຂອງມຶນເມົາ ແລະ ຢາເສບຕິດ. ເພີ່ມທະວີຄວາມເຂົ້າໃຈ ໃຫ້ພໍ່-ແມ່ນັກຮຽນເຫັນຄວາມສໍາຄັນຂອງການສຶກສາ, ໃຫ້ການຮ່ວມມືໃນການແກ້ໄຂບັນຫາລູກຂອງຕົນຢ່າງຈິງຈັງ. ແລະ ແນະນໍາຜົນດີ, ຜົນເສຍ ແລະ ມາດຕາການຄວບຄຸມ ການນໍາໃຊ້ເທັກໂນໂລຊີສະໄໝໃໝ່ແກ່ນັກຮຽນ ໂດຍຜ່ານ ການເຮັດວຽກຂອງໂຮງຮຽນ ແລະ ສະຖາບັນຄອບຄົວ.

**7. ວິພາກຜົນການວິໄຈ**

ຈາກຜົນການສຶກສາ ສະພາບບັນຫາທີ່ເປັນສິ່ງທ້າທາຍຕໍ່ການພັດທະນາການສຶກສາ ສາຍ ສາມັນສຶກສາ ໃນ 4 ຂອບເຂດທີ່ໄດ້ກໍານົດໄວ້ໃນການສຶກສາຄັ້ງນີ້ຄື: ດ້ານຄູສອນ (ວິຊາການ, ຄອບຄົວ, ເສດຖະກິດ-ສັງຄົມ), ດ້ານນັກຮຽນ (ຄອບຄົວ, ເສດຖະກິດ-ສັງຄົມ) ແລະ ດ້ານການປະຕິບັດຫຼັກສູດການຮຽນ-ການສອນ ແລະ ດ້ານສິ່ງອໍານວຍຄວາມສະດວກໃນການປະຕິບັດຫຼັກສູດການຮຽນ-ການສອນ ຂອງໂຮງຮຽນ. ເຊິ່ງຜົນການສຶກສາ ສາມາດສະຫຼຸບໄດ້ດັ່ງນີ້:

ດ້ານຄວາມຄິດເຫັນຂອງພະນັກງານຄູ-ອາຈານ ຕໍ່ກັບສະພາບບັນຫາດ້ານນັກຮຽນ: ຜົນການວິເຄາະຈາກ ສະພາບບັນຫາດັ່ງກ່າວພົບວ່າ ລະດັບຄວາມຄິດເຫັນຂອງຄູແມ່ນໃນລະດັບເຫັນດີ ຫາ ເຫັນດີຫຼາຍສຸດ, ເປັນຕົ້ນແມ່ນ ນັກຮຽນຍັງບໍ່ສາມາດບໍລິຫານເວລາສ່ວນໃຫຍ່ເຂົ້າໃນການຊອກຮູ້ຮໍ່າຮຽນ. ນັກຮຽນສ່ວນໃຫຍ່ຍັງບໍ່ສາມາດເຮັດ ວຽກບ້ານ ແລະ ກິດຈະກໍາການຮຽນ-ການສອນໄດ້ດີເທົ່າທີ່ຄວນ. ພວກເຂົາຍັງຂາດເຕັກນິກ, ຂາດການວາງແຜນການ ຮຽນຮູ້ທີ່ດີ ແລະ ຍັງຂາດແຮງຈູງໃຈໃນການຮຽນ. ອີກບັນຫາໜຶ່ງກໍ່ຍ້ອນຜົນກະທົບສະພາບແວດລ້ອມສັງຄົມຈຶ່ງເຮັດ ໃຫ້ນັກຮຽນຂາດຮຽນ ແລະ ຮຽນບໍ່ໄດ້ດີ. ນອກຈາກນີ້, ຜົນການວິເຄາະຍັງພົບວ່າ ນັກຮຽນຍັງບໍ່ສາມາດປະກອບ ຄວາມຄິດເຫັນ ແລະ ຕອບຄໍາຖາມຂອງຄູ-ອາຈານ ແລະ ບັນຫາການນໍາໃຊ້ໂທລະສັບບໍ່ຖືກວິທີ. ຍັງມີຜົນການວິເຄາະ ທີ່ໜ້າສົນໃຈອີກບັນຫາໜຶ່ງຄື: ນັກຮຽນສ່ວນໃຫຍ່ຍັງພົບບັນຫາສະພາບເສດຖະກິດຄອບຄົວຍັງຂາດເຂີນ. ສໍາລັບ ບັນຫາການປະຕິບັດຫຼັກສູດການຮຽນ-ການສອນ ເຊິ່ງຜົນການສຶກສາພົບວ່າ ກິດຈະກໍາສົ່ງເສີມການຮຽນ ແລະ ການ

ສອນໃນຫ້ອງຮຽນຍັງບໍ່ມີຄວາມຫຼາກຫຼາຍ ແລະ ແຜນການເຄື່ອນໄຫວກິດຈະກໍາເພື່ອສົ່ງເສີມການຮຽນຮູ້ນອກໂຮງຮຽນຍັງບໍ່ສາມາດປະຕິບັດໄດ້ຢ່າງພຽງພໍ ເຊັ່ນ: ທັດສະນະສຶກສາ, ແລກປ່ຽນວິຊາການກັບໂຮງຮຽນ, ລົງຊຸມຊົນເປັນຕົ້ນ. ຮອງລົງມາແມ່ນ ການກ□ານົດແຜນງານກິດຈະກ□າຕ່າງໆ ເພື່ອສົ່ງເສີມການຮຽນຮູ້ຄຽງຄູ່ກັບຊີວິດຈິງ ຍັງບໍ່ພຽງພໍກັບນັກຮຽນ ເຊັ່ນ: ຜັກສວນຄົວ, ລ້ຽງສັດ, ອື່ນໆ. ນອກນີ້ດ້ານການກໍານົດນະໂຍບາຍສົ່ງເສີມ ແລະ ແກ້ໄຂບັນຫານັກຮຽນອ່ອນ, ນັກຮຽນດ້ອຍໂອກາດ ແລະ ນັກຮຽນທີ່ມີບັນຫາທາງດ້ານອື່ນໆ ຍັງປະຕິບັດຍັງບໍ່ທັນໄດ້ດີເທົ່າທີ່ຄວນ ເຊັ່ນ: ການສອນພິເສດ, ສຶກສາອົບຮົມພິເສດ ແລະ ອື່ນໆ ແລະບັນຫາສິ່ງອໍານວຍຄວາມສະດວກໃນການຈັດການຮຽນ-ການສອນ ເຊັ່ນ: ຫ້ອງທົດລອງໃນລາຍວິຊາທີ່ກ່ຽວຂ້ອງຍັງບໍ່ມີຢ່າງພຽງພໍ, ການຈັດສັນສະຖານທີ່ ແລະແວດລ້ອມເພື່ອສົ່ງເສີມຜູ້ຮຽນ ແລະ ການຮຽນຮູ້ພາຍໃນໂຮງຮຽນຍັງບໍ່ສາມາດຕອບສະໜອງໄດ້ຢ່າງພຽງພໍເປັນຕົ້ນຫໍອາຫານ, ຫໍພັກຫຼືສະຖານທີ່ນັກຮຽນພັກຜ່ອນ, ສະຖານທີ່ຄົ້ນຄວ້າຮໍ່າຮຽນ, ປ້າຍຄໍາຂວັນອື່ນໆເປັນຕົ້ນ. ການຕອບສະໜອງເທັກໂນໂລຊີເຂົ້າໃນການຮຽນ-ການສອນຍັງບໍ່ພຽງພໍ. ສໍາລັບບັນຫາສະພາບຄວາມຫຍຸ້ງຍາກ ຂອງຄູ-ອາຈານເອງ, ຜົນການວິເຄາະພົບວ່າ ຄູສ່ວນຫຼາຍຍັງຂາດເຕັກນິກ ແລະ ວິທີການສິດສອນທີ່ດີ. ຮອງລົງມາ ແມ່ນຜົນການວິເຄາະທີ່ໜ້າສົນໃຈສຶກສາຄື: ຄູສອນສ່ວນໃຫຍ່ຍັງພົບບັນຫາດ້ານເສດຖະກິດ ແລະຊີວິດການເປັນຢູ່ທີ່ດີ, ຄູສອນມີຄວາມຫຍຸ້ງຍາກດ້ານວຽກຄອບຄົວ ແລະ ວຽກສ່ວນຕົວອື່ນໆ. ອີກບັນຫາໜຶ່ງທີ່ໜ້າສຶກສາ, ຄູສອນສ່ວນໃຫຍ່ຍັງໄດ້ຮັບມອບໝາຍໜ້າທີ່ຮັບຜິດຊອບຫຼາຍເກີນໄປ ແລະ ສອນຍັງບໍ່ສອດຄ່ອງກັບວິຊາສະເພາະຂອງເຂົາເຈົ້າ. ຄູສອນສ່ວນໃຫຍ່ຍັງຂາດແຮງຈູງໃຈ ແລະຄວາມກະຕືລືລົ້ນໃນການປະຕິບັດການສິດສອນເທົ່າທີ່ຄວນ, ຄູສອນຍັງຂາດເຄື່ອງມືທີ່ທັນສະໄໝເຂົ້າໃນການສິດສອນຢ່າງພຽງພໍ, ຄູຍັງບໍ່ສາມາດແກ້ບັນຫານັກຮຽນທີ່ບໍ່ສາມາດເຮັດວຽກບ້ານ, ບົດເຝິກຫັດ ແລະ ນັກຮຽນບໍ່ໃຫ້ການຮ່ວມມືໃນເວລາດໍາເນີນການຮຽນ-ການສອນໄດ້ດີເທົ່າທີ່ຄວນ. ແລະ ບັນຫາສໍາຄັນຄື ຄູຍັງບໍ່ສາມາດຄວບຄຸມ ແລະ ມີວິທີທີ່ເໝາະສົມໃນການແກ້ໄຂນັກຮຽນທີ່ມີບັນຫາ ຍ້ອນຍັງຂາດການຮ່ວມມື, ການປະສານງານ, ວິທີການເຮັດວຽກຂອງພາກສ່ວນອື່ນໆທີ່ກ່ຽວຂ້ອງ ເປັນຕົ້ນ ແມ່ນສະຖາບັນຄອບຄົວ-ຊຸມຊົນ ແລະ ໂຮງຮຽນ.

ສໍາລັບຜົນການວິເຄາະຄວາມຄິດເຫັນຂອງນັກຮຽນ ຕໍ່ບັນຫາທີ່ເປັນສິ່ງທ້າທາຍຕໍ່ການພັດທະນາການສຶກສາສາຍສາມັນສຶກສາ, ຜົນການສຶກສາສາມາດສະຫຼຸບໄດ້ວ່າ: ສໍາລັບຜົນການວິເຄາະຄວາມຄິດເຫັນຂອງນັກຮຽນ ຕໍ່ກັບສະພາບບັນຫາ ດ້ານນັກຮຽນເອງ ແມ່ນຢູ່ໃນລະດັບ ເຫັນດີຫຼາຍສຸດ ເປັນຕົ້ນແມ່ນ ນັກຮຽນພົບບັນຫາໃນດ້ານ ຜົນກະທົບສະພາບແວດລ້ອມສັງຄົມ ແລະ ການນໍາໃຊ້ໂທລະສັບທີ່ບໍ່ຖືກວິທີ ຈຶ່ງເຮັດໃຫ້ນັກຮຽນຂາດຮຽນ ແລະ ຮຽນບໍ່ໄດ້ດີ. ຮອງລົງມາແມ່ນ ພວກເຂົາຍັງບໍ່ສາມາດໃຊ້ເວລາສ່ວນໃຫຍ່ເຂົ້າໃນການຊອກຮູ້ຮໍ່າຮຽນ, ຂາດການວາງແຜນ, ຂາດເຕັກນິກວິທີການຮຽນຮູ້ທີ່ດີ ແລະ ຂາດແຮງຈູງໃຈໃນການຮຽນ. ນອກຈາກບັນຫາທີ່ກ່າວມາຜົນການວິເຄາະຍັງພົບວ່າ ນັກຮຽນສ່ວນໃຫຍ່ແມ່ນໄດ້ຮັບຜົນກະທົບສະພາບຄອບຄົວຜູ້ປົກຄອງໃຫ້ນັກຮຽນເຮັດວຽກຄອບຄົວຫຼາຍເກີນໄປຈຶ່ງເຮັດໃຫ້ນັກຮຽນຂາດຮຽນ ແລະຮຽນບໍ່ໄດ້ຄຸນນະພາບສາເຫດດັ່ງກ່າວ ອາດຍ້ອນເສດຖະກິດຄອບຄົວຍັງຂາດເຂີນ ແລະ ຊີວິດການເປັນຢູ່ຍັງມີຄວາມຫຍຸ້ງຍາກ ສະນັ້ນ, ຄອບຄົວຈຶ່ງສົ່ງເສີມໃຫ້ລູກຕ້ອງຊ່ວຍວຽກຄອບຄົວ ແລະ ນັກຮຽນຈໍານວນໜຶ່ງກໍ່ອອກໂຮງຮຽນເພື່ອສ້າງຄອບຄົວໃໝ່ເພື່ອຫາສ້າງເສດຖະກິດຄອບຄົວຕົນເອງຕໍ່ໄປ. ອີກບັນຫາໜຶ່ງທີ່ໜ້າສຶກສາຄື: ຜູ້ປົກຄອງສ່ວນຫຼາຍກໍ່ຍັງບໍ່ເຫັນຄວາມສໍາຄັນຂອງການສຶກສາຫຼາຍເທົ່າທີ່ຄວນ. ສໍາລັບບັນຫາດ້ານ

ການປະຕິບັດຫຼັກສູດການຮຽນ-ການສອນ ຜົນການສຶກສາຍັງພົບວ່າ ແຜນການກຳນົດກິດຈະກຳເພື່ອສົ່ງເສີມການຮຽນຮູ້ນອກໂຮງຮຽນ ຍັງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນເຊັ່ນ: ການທັດສະນະສຶກສາ, ການແລກປ່ຽນວິຊາການກັບໂຮງຮຽນ, ການລົງຊຸມຊົນເປັນຕົ້ນ. ຮອງລົງມາແມ່ນນັກຮຽນສ່ວນໃຫຍ່ຍັງບໍ່ໄດ້ຮັບໂອກາດຮຽນຮູ້ດ້ວຍການລົງປະຕິບັດຕົວຈິງຢ່າງພຽງພໍ, ສ່ວນກິດຈະກຳສົ່ງເສີມການຮຽນ ແລະ ການສອນໃນຫ້ອງຮຽນຍັງບໍ່ມີຄວາມຫຼາກຫຼາຍກັບຄວາມຕ້ອງການຂອງນັກຮຽນ. ໃນດ້ານການກຳນົດນະໂຍບາຍສົ່ງເສີມ, ແກ້ໄຂບັນຫານັກຮຽນອ່ອນ, ນັກຮຽນດ້ອຍໂອກາດ ແລະ ນັກຮຽນທີ່ມີບັນຫາທາງດ້ານອື່ນໆ ຍັງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນເຊັ່ນ: ການສອນພິເສດ, ສຶກສາອົບຮົມພິເສດ, ແລະ ອື່ນໆ. ອີກບັນຫາໜຶ່ງດ້ານການກ□ານົດແຜນດ□າເນີນກິດຈະກ□າຕ່າງໆ ເພື່ອສົ່ງເສີມການຮຽນຮູ້ຄຽງຄູ່ກັບການພັດທະນາຄຸນນະພາບຊີວິດຈິງ ຫຼາຍໂຮງຮຽນແມ່ນຍັງບໍ່ສາມາດປະຕິບັດໄດ້ດີເທົ່າທີ່ຄວນກັບຄວາມຕ້ອງການຂອງນັກຮຽນເຊັ່ນ: ການເຮັດຜັກສວນຄົວ, ລ້ຽງສັດ, ອື່ນໆ. ສຳລັບບັນຫາດ້ານທັດສະຄະຕິ ແລະວິທີການສິດສອນຂອງຄູສອນ, ຜົນການສຶກສາພົບວ່າ: ຄູສອນສ່ວນໃຫຍ່ຍັງຂາດວິທີການສອນທີ່ດີ, ຂາດເຕັກນິກກະຕຸ້ນ, ການສ້າງແຮງຈູງໃຈແກ່ນັກຮຽນ ລວມທັງການແກ້ໄຂບັນຫານັກຮຽນແມ່ນປະຕິບັດຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ການສິດສອນຂອງຄູ ສ່ວນໃຫຍ່ແມ່ນຍັງບໍ່ສາມາດນຳໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນການຮຽນ-ການສອນໄດ້ຢ່າງພຽງພໍ. ຜົນການວິເຄາະຍັງສະແດງໃຫ້ເຫັນວ່າ ຄູຍັງຂາດແຮງຈູງໃຈ, ຂາດຄວາມກະຕືລືລົ້ນໃນການສິດສອນ ເຊິ່ງມັນສະແດງອອກໃນການອະທິບາຍບົດຮຽນຂອງຄູຍັງບໍ່ຈະແຈ້ງຢ່າງພຽງພໍ, ສາເຫດດັ່ງກ່າວອາດຍ້ອນຄູສອນຍັງຂາດເຕັກນິກ ແລະ ວິທີການສິດສອນຫຼາກຫຼາຍ.

ຈາກຜົນການວິເຄາະຄວາມຄິດເຫັນຂອງພະນັກງານຄູ-ອາຈານ, ນັກຮຽນ ແລະ ຫົວໜ້າຫ້ອງການສຶກສາທິການ ແລະກິລາເມືອງ ຈາກ 9 ຕົວເມືອງ, 1 ນະຄອນ ແລະ ໂຮງຮຽນມັດທະຍົມສົມບູນ 30 ແຫ່ງ ພາຍໃນແຂວງຈຳປາສັກ, ສາມາດສະຫຼຸບໄດ້ວ່າ ຄວາມຄິດເຫັນຕໍ່ສະພາບບັນຫາທີ່ເປັນສິ່ງທ້າທາຍຕໍ່ການພັດທະນາການສຶກສາ ສາຍສາມັນສຶກສາ ພາຍໃນແຂວງ ຈຳປາສັກ ແມ່ນມີຄວາມຄິດເຫັນທີ່ມີຄວາມສອດຄ່ອງ ໄປໃນທິດທາງດຽວກັນ ແລະ ສາມາດພິສູດຜົນໄປຕາມສົມມຸດຕິຖານທຸກປະການ. ສະນັ້ນ, ຜົນການວິເຄາະດັ່ງກ່າວຈຶ່ງມີຄວາມໜ້າສົນໃຈສຶກສາ ແລະ ມີຄວາມໜ້າເຊື່ອຖືສູງ. ສາມາດເປັນຂໍ້ມູນອ້າງອີງໄດ້ ໃນການໃຊ້ເຂົ້າການນຳມາປັບປຸງ ແລະ ພັດທະນາການສຶກສາ ສາຍສາມັນສຶກສາ ພາຍໃນແຂວງ ຈຳປາສັກໃຫ້ມີຄວາມຖືກຕ້ອງ ແລະ ເໝາະສົມກັບສະພາບຕົວຈິງ. ແຕ່ເຖິງຢ່າງໃດກໍ່ຕາມ, ບັນຫາຕ່າງໆອາດມີການປ່ຽນແປງຕາມສະພາບແວດລ້ອມເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ແຕ່ລະທ້ອງຖິ່ນທີ່ແຕກຕ່າງກັນ. ເພື່ອເຮັດໃຫ້ການແກ້ໄຂບັນຫາໃຫ້ຖືກປະເດັນ. ດັ່ງນັ້ນ, ພາກສ່ວນທີ່ກ່ຽວຂ້ອງຈະຕ້ອງໄດ້ພິຈາລະນາແກ້ໄຂບັນຫາຕ່າງໆໃຫ້ຖືກວິທີ ແລະ ເໝາະສົມ. **ທາງຄະນະທີມງານນັກຄົ້ນຄວ້າຈຶ່ງໄດ້ພິຈາລະນາສັງລວມເອົາຂໍ້ສະເໜີແນະທີ່ສຳຄັນ ເພື່ອປັບປຸງແກ້ໄຂບັນຫາຕ່າງໆໄວ້ດັ່ງລຸ່ມນີ້:**

1). ການຊ່ວຍເຫຼືອບົນພື້ນຖານດ້ານຊີວິດການເປັນຢູ່ແກ່ພາກສ່ວນນັກຮຽນ ແລະ ຄູສອນ: ຊຸກຍູ້ສົ່ງເສີມວຽກງານໃຫ້ຄອບຄົວພໍ່ແມ່ນັກຮຽນ ແລະ ພະນັກງານມີວຽກເຮັດງານທຳທີ່ໝັ້ນຄົງ ແລະ ໄດ້ຮັບສະຫວັດດີການທີ່ດີ, ເປີດໂອກາດໃຫ້ມີການຮ່ວມມື ກັບໂຄງການ ແລະ ກະຊວງການອື່ນໆ ເພື່ອພັດທະນາຊີວິດໃຫ້ດີຂຶ້ນ. ເປີດໂອກາດໃຫ້ໂຮງຮຽນເຮັດກິດຈະກຳຕ່າງໆເພື່ອເປັນການສົ່ງເສີມລາຍໄດ້ແກ່ໂຮງຮຽນ, ຄູສອນ ແລະ ນັກຮຽນ ເປັນຕົ້ນ ການເຮັດ

ກະສິກໍາປູກຝັງ-ລ້ຽງສັດ ສະເພາະໃນເວລາເຄື່ອນໄຫວກິດຈະກໍານອກຫຼັກສູດ. ສ້າງກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງພະນັກງານຄູ-ອາຈານ, ນັກຮຽນ ແລະ ລະດັບໂຮງຮຽນ ເພື່ອແກ້ໄຂບັນຫາຄວາມຫຍຸ້ງຍາກໃນການດໍາລົງຊີວິດຂັ້ນພື້ນຖານ.

2). ການຊ່ວຍເຫຼືອດ້ານໂຄງລ່າງພື້ນຖານແກ່ບັນດາໂຮງຮຽນມັດທະຍົມສຶກສາ: ສ້າງລະບົບເຄືອຂ່າຍໂຮງຮຽນ ກໍ່ຕັ້ງກອງທຶນພັດທະນາການສຶກສາ ພາຍໃນເມືອງ ຫຼື ພາຍໃນແຂວງ. ສ້າງລະບົບສິ່ງແວດລ້ອມຂອງໂຮງຮຽນເພື່ອເປັນສິ່ງອໍານວຍຄວາມສະດວກໃຫ້ແກ່ການດໍາເນີນກິດຈະກໍາການຮຽນ-ການສອນ ທັງໃນ ແລະ ນອກຫຼັກສູດ. ສະໜອງແຫຼ່ງທຶນເພື່ອພັດທະນາ ແລະ ບູລະນະຕຶກອາຄານຮຽນ.

3). ການຊ່ວຍເຫຼືອບົນພື້ນຖານຂັ້ນໂຮງຮຽນ: ເພີ່ມທະວີແຮງງານສຶກສາ ແລະ ສະໜອງແຫຼ່ງທຶນເພື່ອສົ່ງເສີມການສະໜອງອາຫານແກ່ໂຮງຮຽນ ແລະ ເຮັດໃຫ້ນັກຮຽນມີລາຍຮັບຂັ້ນພື້ນຖານ ໂດຍຕິດພັນກັບວິຖີຊີວິດທີ່ເໝາະສົມກັບແຕ່ລະທ້ອງຖິ່ນ. ສ້າງຄວາມເຂັ້ມແຂງໃຫ້ສະມາຄົມພໍ່-ແມ່ນັກຮຽນ ໂດຍມີການປະສານສົບທົບລະຫວ່າງຊຸມຊົນ ແລະ ໂຮງຮຽນຂອງແຕ່ລະທ້ອງຖິ່ນ. ສ້າງຕັ້ງລະບົບການຄວບຄຸມ ອັດຕາການປະລະຂອງນັກຮຽນ ແລະ ພ້ອມວາງແນວທາງເພື່ອຫາວິທີແກ້ໄຂຕໍ່ກັບບັນຫາດັ່ງກ່າວຢ່າງຈິງຈັງ ແລະ ຈັດຕັ້ງລະບົບກອງທຶນລະຫວ່າງໂຮງຮຽນ ເພື່ອສະໜອງທຶນບູລະນະພື້ນຖານໂຄງລ່າງຂອງແຕ່ລະໂຮງຮຽນທີ່ຂຶ້ນກັບ.

4). ການຊ່ວຍເຫຼືອພື້ນຖານແຜນງານຮ່ວມມືວຽກງານພັດທະນາການສຶກສາ ສາຍສາມັນ ແຕ່ຂັ້ນພື້ນຖານຮອດສູນກາງ: ສ້າງລະບົບຍ້ອງຍໍຜົນການຮຽນ ແລະ ການປະພຶດໃຫ້ແກ່ນັກຮຽນ. ສ້າງແຜນການເກັບສະຖິຕິນັກຮຽນພິເສດ ແລະ ຫາແຫຼ່ງທຶນເພື່ອສະໜອງການຊ່ວຍເຫຼືອຂັ້ນພື້ນຖານ. ເປີດບັ້ນສຶກສາອົບຮົມ ແລະໂຄສະນາຄວາມເຂົ້າໃຈກ່ຽວກັບການສຶກສາໃຫ້ນັກຮຽນ ແລະ ຜູ້ປົກຄອງຢ່າງທົ່ວເຖິງ ເພື່ອໃຫ້ເຫັນຄຸນຄ່າທາງການສຶກສາ.ເພີ່ມຄວາມເຂົ້າໃຈກ່ຽວກັບການຮຽນຮູ້ຂັ້ນພື້ນຖານ ເພື່ອໃຫ້ສອດຄ່ອງກັບຊີວິດຈິງ ແລະ ເໝາະສົມກັບທ່ອງຖິ່ນ.ສ້າງແຜນຝຶກອົບຮົມ ແລະ ເຜີຍແຜ່ວຽກງານການບໍລິຫານການສຶກສາ ໃຫ້ແກ່ຜູ້ບໍລິຫານການສຶກສາຂັ້ນໂຮງຮຽນ ແລະ ໜ່ວຍງານພັດທະນາການສຶກສາຂັ້ນບ້ານໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ. ເພີ່ມທະວີການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນເພື່ອບໍລິການດ້ານການສຶກສາ.

## ເອກະສານອ້າງອີງ

ກົມຈັດຕັ້ງແລະພະນັກງານ (2016). ການປະເມີນການຈັດຕັ້ງປະຕິບັດແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດໄລຍະທີ 2. ວ່າດ້ວຍກົດໝາຍການສຶກສາ.ນະຄອນຫຼວງວຽງຈັນ: ກະຊວງຊວງການສຶກສາທິການ ແລະກະລາ.

ກົມສ້າງຄູ. (2015). ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 8, ມະຕິກອງປະຊຸມໃຫຍ່ສູນກາງພັກຄັ້ງທີ10, ແຜນຄວາມຕ້ອງການ, ກໍ່ສ້າງແບະບັນຈຸຄູສອນ.ນະຄອນຫຼວງວຽງຈັນ: ຫ້ອງການພິມແລະສັງລວມເອກະສານກົມສ້າງຄູ.

ກົມສ້າງຄູ. (2010). ມາດຖານຂອງຄູ, ໂຄງການພັດທະນາການສ້າງຄູແລະຍົກຖານະຄູ.ນະຄອນຫຼວງວຽງຈັນ: ກົມສ້າງຄູ, ກະຊວງການສຶກສາທິການແລະກະລາພິມຄັ້ງທີ 1.

ກົມສຶກສາຊັ້ນສູງ. (2016). ທັກສະຄົ້ນຄວ້າ.ນະຄອນຫຼວງວຽງຈັນ: ກ້ອງການສັງລວມເອກະສານກົມສຶກສາຊັ້ນສູງ, ກະຊວງສຶກສາທິການແລະກິລາ.

ກົມພົວພັນອາຊຽນ. (2015). ຂໍ້ຕົກລົງຂອງປະຊາຄົມອາຊຽນວ່າດ້ວຍການພັດທະນາຄຸນນະພາບການສຶກສາອາຊຽນ. ນະຄອນຫຼວງວຽງຈັນ: ກະຊວງການຕ່າງປະເທດ, ສປປລາວ.

ກົມພັດທະນາການສຶກາສາ. (2016). ວິໃສທັດຮອດປີ 2030, ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາແລະກິລາ 5 ປີຄັ້ງທີ 8. ນະຄອນຫຼວງວຽງຈັນ: ກະຊວງການສຶກສາທິການແລະກິລາ.

ກະຊວງສຶກສາ ແລະກິລາ (2015). ຄູ່ມືເພື່ອການຈັດຕັ້ງປະຕິບັດການປະກັນຄຸນນະພາບສະຖານສຶກສາຊັ້ນສູງ. ສະພານທອງການພິມ. ຄັ້ງທີI. SHEP.ໜ້າທີ 16.

ກະຊວງສຶກສາ ແລະກິລາ (2015). ກົດໝາຍວ່າດ້ວຍການສຶກສາ(ສະບັບປັບປຸງ). ພິມທີ່ບໍລິສັດວິສາຫະກິດໂຮງພິມສຶກສາ. ຄັ້ງທີI. SHEP.ໜ້າທີ 7-10.

ສູນການສຶກສາຮຽນຮ່ວມ. (2015). ອຸປະສັກກີດຂວາງການເຂົ້າຮຽນ, ແລະຍຸດທະວິທີທີ່ເປັນໄປໄດ້ໃນການເພີ່ມແລະການຮັກສາການເຂົ້າຮຽນຂອງນັກຮຽນຊັ້ນມັດທະຍົມ: ໂຄງການພັດທະນາການສຶກສາຂັ້ນພື້ນຖານ.ໜ້າ 35.

Suruga, P. O. (2014). Obstacles to Basic Education Development in Rural Lao PDR - Delayed Enrolment, Grade Repetition and Dropout - . Education Development, Gender, Ethnics, Lao PDR JEL Classification: I20, O15, P20 , 35.

UNICEP. (2011). SCHOOLS OF QUALITY: A Case Study on Rights-Based Education Reform in The Lao People's Democratic Republic . Vientiane capital: Education Section Programe Division.

ມະຫາວິທະຍາໄລ ຈຳປາສັກ